ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------

ສະພາແຫ່ງຊາດ ເລກທີ 13 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 09 ພະຈິກ 2005

# ກົດໝາຍ
# ວ່າດ້ວຍປ່າໄມ້ ສະບັບປັບປຸງ

---

**ມາດຕາ 22. ກິດຈະການປ່າໄມ້**

ກິດຈະການປ່າໄມ້ ແມ່ນທຸກການເຄື່ອນໄຫວທີ່ກ່ຽວຂ້ອງກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຊຶ່ງປະຕິບັດຢູ່ໃນ ຫຼື ນອກ ເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ເຊັ່ນ: ການສຳຫຼວດ, ອອກແບບ, ການປູກ, ການຟື້ນຟູ, ການບົວລະບັດຮັກສາ, ການພັດທະນາປ່າໄມ້, ການຂຸດຄົ້ນ, ການເຄື່ອນຍ້າຍໄມ້ ແລະ ຜະລິດຕະພົນປ່າໄມ້, ການປົກປັກຮັກສາຊັບພະຍາກອນປ່າໄມ້, ການປົກປັກຮັກສາແຫຼ່ງນ້ຳ, ສິ່ງແວດລ້ອມທຳມະຊາດກ່ຽວກັບປ່າໄມ້, ການປົກປັກຮັກສາ ແລະ ຂະຫຍາຍພັນພືດ, ພັນໄມ້, ພັນສັດປ່າ ແລະ ສັດນ້ຳ ລວມທັງການຢຸດຕິການທຳລາຍປ່າໄມ້ ເປັນຕົ້ນ ການຖາງປ່າເຮັດໄຮ່ໄປເຮັດອາຊີບຄົງທີ່.

**ມາດຕາ 25. ການຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້**

ການຂຸດຄົ້ນໄມ້ ແລະ ຜະລິດຕະພົນປ່າໄມ້ ດຳເນີນໄດ້ ສະເພາະ ແຕ່ໃນເຂດປ່າຜະລິດທີ່ໄດ້ຜ່ານການສຳຫຼວດຈັດສັນ ແລະ ສຳຫຼວດ ເພື່ອຂຸດຄົ້ນ, ໃນເຂດທີ່ໄດ້ວາງແຜນຄຸ້ມຄອງປ່າໄມ້ເທົ່ານັ້ນ ແນໃສ່ຮັບປະກັນການຂຸດຄົ້ນໄມ້ຢ່າງຕໍ່ເນື່ອງ ແລະ ຍືນຍົງ.

ການຂຸດຄົ້ນໄມ້ຈາກປ່າທຳມະຊາດ ຕອ້ງໄດ້ຮັບການຕົກລົງເຫັນດີຂອງລັດຖະບານ ຕາມແຜນການທີ່ໄດ້ຜ່ານການຮັບຮອງຈາກສະພາແຫ່ງຊາດ.

ການຂຸດຄົ້ນໄມ້ຕ້ອງປະຕິບັດຕາມລະບຽບການຕົ້ນຕໍດັ່ງນີ້:

- ນຳໃຊ້ລະບົບຕັດຍອນ, ຫ້າມຕັດກ້ຽງ ເວັ້ນເສັຽແຕ່ກໍລະນີການຕັດໄມ້ອອກຈາກເຂດກໍ່ສ້າງພື້ນຖານໂຄງລ່າງ ແຕ່ຕ້ອງໄດ້ແຈ້ງ ໃຫ້ພາກສວ່ນກ່ຽວຂ້ອງຊາບ;
- ຕັດໄມ້ທີ່ກຳນົດໃຫ້ຕັດ ໂດຍຮັບປະກັນການສືບພັນ;
- ຕັດໄມ້ຕ້ອງເກັບກູ້ເອົາ ເພື່ອນຳໃຊ້ໃຫ້ໝົດຄຸນຄ່າ;
- ຕັດໄມ້ ຖືກຕາມເຕັກນິກ-ວິຊາການ;

- ຕັດໄມ້ ໂດຍຈຳກັດການທຳລາຍຕົ້ນໄມ້ ທີ່ຢູ່ອ້ອມແອ້ມ, ຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ, ເກີດດິນເຊາະເຈື່ອນ ຫຼື ນ້ຳບົກແຫ້ງ;
- ຕັດໄມ້ແລ້ວ ຕ້ອງບົວລະບັດຮັກສາປ່ານັ້ນ ຫຼື ປູກຄືນ;

ສຳລັບການຂຸດຄົ້ນ ຜະລິດຕະພົນປ່າໄມ້ ເຊັ່ນ: ຮາກ, ຫົວ, ເຄືອ, ຍອດ, ໜໍ່, ໃບ, ດອກ, ໝາກ, ເປືອກ, ນ້ຳມັນ, ຢາງໄມ້, ເຫັດ ແລະ ອື່ນໆນັ້ນ ໃຫ້ປະຕິບັດຕາມລະບຽບການສະເພາະ ຊຶ່ງອົງການທີ່ກ່ຽວຂ້ອງເປັນຜູ້ວາງອອກ.

**ມາດຕາ 31. ການສ້າງຕັ້ງ ແລະ ການເຄື່ອນໄຫວໂຮງງານປຸງແຕ່ງໄມ້ ຫຼື ຜະລິດຕະພົນປ່າໄມ້**

ການສ້າງຕັ້ງ, ການປັບປຸງ, ການຂະຫຍາຍ, ການຍົກຍ້າຍ, ການດັດສົມ ແລະ ການຍຸບເລີກໂຮງງານປຸງແຕ່ງໄມ້ ຫຼື ໂຮງງານປຸງແຕ່ງຜະລິດຕະພົນປ່າໄມ້ ຕ້ອງໄດ້ຮັບອະນຸຍາດຈາກກະຊວງອຸດສາຫະກຳ ແລະ ຫັດຖະກຳ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

**ມາດຕາ 32. ການຄຸ້ມຄອງ ເຄື່ອງຈັກຂຸດຄົ້ນໄມ້ ແລະ ເຄື່ອງ ຈັກປຸງແຕ່ງໄມ້.**

ການນຳເຂົ້າ, ການຈຳໜ່າຍ, ການຄອບຄອງ ແລະ ການນຳໃຊ້ເຄື່ອງຈັກຂຸດຄົ້ນໄມ້ທຸກຊະນິດ ຕ້ອງໄດ້ຮັບອະນຸຍາດຈາກກະຊວງກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ.

ການນຳເຂົ້າ, ການຈຳໜ່າຍ, ການຄອບຄອງ ແລະ ການນຳໃຊ້ ເຄື່ອງຈັກປຸງແຕ່ງໄມ້ທຸກຊະນິດ ຕ້ອງໄດ້ຮັບອະນຸຍາດຈາກກະຊວງອຸດສາຫະກຳ ແລະ ຫັດຖະກຳ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 62. ສິດ ແລະ ໜ້າທີ່ ຂອງຫ້ອງການສົ່ງເສີມ ກະສິກຳ ແລະ ປ່າໄມ້ເມືອງ.**

ໃນການຄຸ້ມຄອງປ່າໄມ້, ທີ່ດິນປ່າໄມ້ ແລະ ກິດຈະການປ່າໄມ້, ຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ເປັນເສນາທິການ ໃຫ້ແກ່ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ ໃນການຄົ້ນຄວ້າຈັດຕັ້ງປະຕິບັດຕົວຈິງບັນດາແຜນການ, ແຜນງານ, ໂຄງການ, ຂໍ້ກຳນົດ, ກົດລະບຽບ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳ ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງ ພາຍໃຕ້ການຄຸ້ມຄອງກວດກາຂອງເຈົ້າເມືອງ;
2. ຮັບຜິດຊອບຈັດຕັ້ງປະຊາຊົນຂັ້ນບ້ານຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້, ຈັດຕັ້ງການມອບທີ່ດິນປ່າໄມ້ ແລະ ມອບປ່າທີ່ເປັນປ່າຊຸດໂຊມ ຫຼື ເນື້ອທີ່ດິນປອກໂຫຼ້ນໃຫ້ຄອບຄົວປະຊາຊົນຢູ່ໃນແຕ່ລະບ້ານປູກ ຫຼື ມອບປ່າເຫຼົ່າ ເພື່ອຟື້ນຟູ ແລະ ບົວລະບັດຮັກສາເຮັດໃຫ້ປ່າດັ່ງກ່າວກາຍເປັນປ່າໄມ້ຕຶບໜາຄືນໃໝ່ທີ່ອຸດົມສົມບູນ.ພ້ອມດຽວກັນ ກໍຈັດຕັ້ງການປົກປັກຮັກສາຊັບພະຍາກອນປ່າໄມ້, ປ່າປ້ອງກັນ

ແຫຼ່ງນ້ຳ, ສັດນ້ຳ, ສັດປ່າ ແລະ ປົກປັກຮັກສາສິ່ງແວດລ້ອມທຳມະຊາດ ກ່ຽວກັບປ່າໄມ້ຢ່າງເຂັ້ມງວດ.

3. ຕິດຕາມກວດກາການປະຕິບັດລະບຽບການກ່ຽວກັບການຕັດໄມ້, ຂຸດຄົ້ນໄມ້ ແລະ ຜະລິດຕະພັນປ່າໄມ້, ການລ່າເນື້ອ, ຫາສັດນ້ຳ ແລະ ຊື້-ຂາຍ ສັດດັ່ງກ່າວ;
4. ຄົ້ນຄວ້າ ແລະ ມີຄຳເຫັນ ກ່ຽວກັບການລົງທຶນດ້ານກິດຈະການປ່າໄມ້;
5. ພິຈາລະນາກ່ຽວກັບການຫັນປ່ຽນປ່າໄມ້ ຫຼື ທີ່ດິນປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້.

ປະທານສະພາແຫ່ງຊາດ